

ศูนย์พัฒนาและบริการด้านการเกษตร
ห้วยซอน-ห้วยซั้ว

# 20 ປີ

## ສູນພັດທະນາແລະບໍລິການດ້ານກະສິກຳຫ້ວຍຊອນ-ຫ້ວຍຊົ້ວ
## ສປປ.ລາວ





# ບົດທີ 3
# ຜົນສຳເລັດ

## ສູນກາງອີງຄວາມຮູ້

ຕະຫຼອດໄລຍະເວລາ 20 ປີທີ່ຜ່ານມາ ສູນພັດທະນາ ແລະ ບໍລິການດ້ານການກະເສດຫ້ວຍຊອນ-ຫ້ວຍຊົ້ວ ໄດ້ດຳເນີນຕາມວັດຖຸປະສົງຫຼັກຂອງໂຄງການ ໃນການເຮັດໜ້າທີ່ເປັນແຫຼ່ງຮຽນຮູ້ ແລະ ເຜີຍແຜ່ຄວາມຮູ້ທາງວິຊາການດ້ານການກະເສດທີ່ສອດຄ້ອງກັບສະພາບພື້ນທີ່ ແລະ ເໝາະສົມກັບວິຖີຊີວິດຂອງປະຊາຊົນລາວ ຈົນປະສົບຜົນສຳເລັດ ສາມາດເປັນສູນກາງໃນການເຜີຍແຜ່ຄວາມຮູ້ ເປັນສະຖານທີ່ຝຶກອົບຮົມ, ສະຖານທີ່ຝຶກງານ ສຳລັບພະນັກງານດ້ານການກະເສດ ລວມເຖິງນັກຮຽນນັກສຶກສາເປັນຈຳນວນຫຼວງຫຼາຍ.




ຫຼັກ 22 ສູນກາງອີງຄວາມຮູ້
ລະດັບຊາວບ້ານ/ ກະເສດຕະກອນ
ລະດຸບອົງກອນ/ ໜ່ວຍງານ
ຫຼັກ 22
ເລີ່ມຕັ້ງແຕ່ປີ2006
ອົບຮົມໃຫ້ຄວາມຮູ້ດ້ານການກະເສດ160-240 ຄົນ/ປີ
ເລີ່ມຕັ້ງແຕ່ປີ 2006
ໂຄງການລັດ 150 ຄົນ
ເອກະຊົນອື່ນໆ 15-50 ຄົນ/ປີ
ລະດັບໂຮງຮຽນ/ ສະຖາບັນການສຶກສາ
ຄອບຄົວຕົວແບບ
ເລີ່ມຕັ້ງແຕ່ປີ 2002
ນັກສຶກສາຝຶກງານ 20-50 ຄົນ/ປີ
ຈາກ 14 ສະຖາບັນການສຶກສາ
ກະເສດຕະກອນຍາກຈົນບໍ່ມີທີ່ດິນເຮັດກິນ
ໃຫ້ຄວາມຮູ້ແລະເຂົ້າຢູ່ເຮັດກິນໃນສູນຈຳນວນ 13 ຄົວເຮືອນ

## ການຂະຫຍາຍຜົນສຳເລັດ ສູ່ ປະຊາຊົນລາວ.

ຈາກຄວາມຮ່ວມມືກັນຢ່າງໃກ້ຊິດຂອງຄະນະວິຊາການຝ່າຍ ລາວ ແລະ ໄທ ໄດ້ວາງເປົ້າໝາຍໃນດ້ານການຂະຫຍາຍຜົນໄປຍັງແຂວງຕ່າງໆ ຈຳນວນ 17 ແຂວງ ເພື່ອຖ່າຍທອດເທັກໂນໂລຢີດ້ານການກະເສດ ໃຫ້ກັບພະນັກງານພະແນກກະສິກຳ ແລະ ປ່າໄມ້ໄດ້ຮັບຄວາມຮູ້ ແລະ ນຳອົງຄວາມຮູ້ ແລະ ເທັກໂນໂລຢີຂອງການພັດທະນາດ້ານຕ່າງໆເຊັ່ນ: ດ້ານ ຊົນລະປະທານ, ດ້ານພັດທະນາທີ່ດິນ, ດ້ານການປູກພືດ, ດ້ານການລ້ຽງສັດ ແລະ ດ້ານການປະມົງ ໄປຖ່າຍທອດ ແລະ ສົ່ງເສີມ ຊາວກະສິກອນລາວ ເພື່ອນຳໄປໝູນໃຊ້ກັບການກະເສດ ຊຶ່ງໄດ້ດຳເນີນໄປແລ້ວ 09 ແຂວງ ມີພະນັກງານພະແນກກະສິກຳ ແລະ ປ່າໄມ້ ແລະ ຄອບຄົວຕົວແບບເຂົ້າຮ່ວມສຳມະນາ ຈຳນວນ 320 ຄອບຄົວ.



- ແຂວງຫຼວງພະບາງ ໄປດຳເນີນການຂະຫຍາຍຜົນ ເມື່ອວັນທີ 05-06 ສິງຫາ 2010
- ແຂວງສະຫວັນນະເຂດ ໄປດຳເນີນການຂະຫຍາຍຜົນ ເມື່ອວັນທີ 24-25 ກັນຍາ 2010
- ແຂວງບໍລິຄຳໄຊ ໄປດຳເນີນການຂະຫຍາຍຜົນ ເມື່ອວັນທີ 19-20 ຕຸລາ 2010
- ແຂວງຫຼວງນ້ຳທາ ໄປດຳເນີນການຂະຫຍາຍຜົນ ເມື່ອວັນທີ 16-17 ສິງຫາ 2011
- ນະຄອນຫຼວງວຽງຈັນ ໄປດຳເນີນການຂະຫຍາຍຜົນ ເມື່ອວັນທີ 30 ກັນຍາ 2011
- ແຂວງ ອຸດົມໄຊ ໄປດຳເນີນການຂະຫຍາຍຜົນ ເມື່ອວັນທີ 19-20 ພຶດສະພາ 2012
- ແຂວງ ອັດຕະປື ໄປດຳເນີນການຂະຫຍາຍຜົນ ເມື່ອວັນທີ 23-24 ສິງຫາ 2012
- ແຂວງ ຜົ້ງສາລີ ໄປດຳເນີນການຂະຫຍາຍຜົນ ເມື່ອວັນທີ 14-15 ພຶດສະພາ 2013
- ແຂວງ ຊຽງຂວາງ ໄປດຳເນີນການຂະຫຍາຍຜົນ ເມື່ອວັນທີ 23-24 ສິງຫາ 2013



ຈາກການຂະຫຍາຍຜົນດັ່ງກ່າວເຮັດໃຫ້ຮູ້ວ່າແຕ່ລະແຂວງມີບັນຫາ ແລະ ຄວາມຕ້ອງການໃນການພັດທະນາດ້ານການກະເສດດ້ານໃດແດ່ ແລະ ມີຄວາມສາມາດທີ່ຈະພັດທະນາໃຫ້ເປັນສູນກາງຂອງການພັດທະນາດ້ານການກະເສດສະເພາະດ້ານແນວໃດ ຍົກຕົວຢ່າງ ເຊັ່ນ:




- ແຂວງ ຫຼວງພະບາງ ມີຄວາມຕ້ອງການ ແລະ ຄວາມສາດທີ່ຈະພັດທະນາດ້ານການປະມົງ ຈຶ່ງໄດ້ສະໜັບສະໜູນງົບປະມານໃນການສ້າງສະຖານທີ່ເພາະພັນປາ, ປັດໃຈ ພ້ອມທັງອົງຄວາມຮູ້ການເພາະ ແລະ ຂະຫຍາຍພັນປາ.

- ແຂວງ ຫຼວງນ້ຳທາ ມີຄວາມຕ້ອງການ ແລະ ຄວາມສາດທີ່ຈະພັດທະນາດ້ານການປູກໄມ້ໃຫ້ມາກ ເຊິ່ງສູນສຶກສາການພັດທະນາຫ້ວຍຮ່ອງໄຄ້ ອັນເນື່ອງມາຈາກພຣະຣາຊດຳຣິ ຈຶ່ງໄດ້ສະໜັບສະໜູນພັນໄມ້ໃຫ້ໝາກຊະນິດຕ່າງໆ ຈຳນວນ 1.200 ຕົ້ນ ໃຫ້ກັບພະແນກກະສິກຳ ແລະ ປ່າໄມ້ ແຂວງ ຫຼວງນ້ຳທາ ເພື່ອປູກ ແລະ ຂະຫຍາຍພັນຕໍ່ໄປ

## ຂະຫຍາຍຜົນ 9 ແຂວງ



ປານິງ

**ແຂວງຫຼວງພະບາງ**
ໄປດຳເນີນການຂະຫຍາຍຜົນ
ເມື່ອວັນທີ 5-6/8/2010



**ແຂວງສະຫວັນນະເຂດ**
ໄປດຳເນີນການຂະຫຍາຍຜົນ
ເມື່ອວັນທີ 24-25/9/2010



**ແຂວງບໍລິຄຳໄຊ**
ໄປດຳເນີນການຂະຫຍາຍຜົນ
ເມື່ອວັນທີ 19-20/10/2010





ໄມ້ໄຫ້ພາກ

**ແຂວງຫຼວງນ້ຳທາ**
ໄປດຳເນີນການຂະຫຍາຍຜົນ
ເມື່ອວັນທີ16-17/8/2011



**ນະຄອນຫຼວງວຽງຈັນ**
ໄປດຳເນີນການຂະຫຍາຍຜົນ
ເມື່ອວັນທີ30/9/2011



**ແຂວງອຸດົມໄຊ**
ໄປດຳເນີນການຂະຫຍາຍຜົນ
ເມື່ອວັນທີ29-30/11/2012





ລ້ຽງສັດ

**ແຂວງອັດຕະປື**
ໄປດຳເນີນການຂະຫຍາຍຜົນ
ເມື່ອວັນທີ23-24/8/2012



**ແຂວງຜົ້ງສາລີ**
ໄປດຳເນີນການຂະຫຍາຍຜົນ
ເມື່ອວັນທີ14-15/5/2013



**ແຂວງຊຽງຂວາງ**
ໄປດຳເນີນການຂະຫຍາຍຜົນ
ເມື່ອວັນທີ23-24/8/2013



- ແຂວງ ອັດຕະປື ມີຄວາມຕ້ອງການ ແລະ ຄວາມສາດທີ່ຈະພັດທະນາດ້ານການລ້ຽງສັດ ຈຶ່ງໄດ້ໃຫ້ການສະໜັບສະໜູນປັດໃຈການຜະລິດໄດ້ແກ່ ເປັດເທດ ຈຳນວນ 300 ໂຕ ພ້ອມຕູ້ຟັກໄຂ່ ເພື່ອເປັນແຫຼ່ງເບາະ ແລະ ຂະຫຍາຍພັນໃຫ້ກັບຊາວກະສິກອນຕໍ່ໄປ.



## ຈາກລະດັບແຂວງ ສູ່ລະດັບປະເທດ

ຈາກບົດບາດ ແລະ ຄວາມສຳເລັດທີ່ເຫັນເປັນຮູບປະທຳໃນດ້ານອົງຄວາມຮູ້ດັ່ງກ່າວ ໂດຍສະເພາະຄວາມສາມາດຂອງສູນພັດທະນາ ແລະ ບໍລິການດ້ານການກະເສດ ທີ່ມີຄວາມພ້ອມທີ່ຈະດຳເນີນງານໃນຂອບເຂດທົ່ວປະເທດຂອງ ສາທາລະນະລັດປະຊາທິປະໄຕປະຊາຊົນລາວ ປະກອບກັບຄວາມສຳເລັດຂອງສູນພັດທະນາ ແລະ ບໍລິການດ້ານການກະເສດ ທີ່ໄດ້ຮັບພຣະຣາຊທານ ພຣະມະຫາກະຣຸນາທິຄຸນ ຈາກສົມເດັດພຣະເຈົ້າ ມະຫາຊີວິດ ໃຫ້ຈັດຕັ້ງສູນນີ້ຂຶ້ນ ດັ່ງນັ້ນ ເມື່ອວັນທີ 09 ຕຸລາ 2013 ກະຊວງກະສິກຳ ແລະ ປ່າໄມ້ ຈຶ່ງໄດ້ຈັດພິທີ ສົ່ງມອບສູນ ຈາກເດີມ ເຊິ່ງຢູ່ພາຍໃຕ້ການຈັດຕັ້ງປະຕິບັດ ຂອງ ນະຄອນຫຼວງວຽງຈັນ ໃຫ້ມາຢູ່ການດູແລ ແລະ ຈັດຕັ້ງປະຕິບັດຂອງກະຊວງກະສິກຳ ແລະ ປ່າໄມ້ ເຊິ່ງຈະເຮັດໃຫ້ມີງົບປະມານ ແລະ ບຸກຄະລາກອນທີ່ຈະສະໜັບສະໜູນການປະຕິບັດວຽກງານເພີ່ມຫຼາຍຂຶ້ນທີ່ສຳຄັນ ຈະມີບົດບາດໃນການສ້າງອົງຄວາມຮູ້ ແລະ ພັດທະນາບຸກຄະລາກອນທາງດ້ານການກະເສດຂອງລາວໃຫ້ພັດທະນາກ້າວໄກຍິ່ງຂຶ້ນໄປ.



## ຕົວຢ່າງຊາວກະສິກອນທີ່ປະສົບຜົນສຳເລັດ.

- ທ້າວ ແກ້ວ ພິມພິສອຍ ປັດຈຸບັນ ອາຍຸ 62 ປີ ມີພູມລຳເນົາເດີມ ຢູ່ແຂວງ ສະຫວັນນະເຂດ ທາງ ພາກໃຕ້ ຂອງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ເບື້ອງຕົ້ນມີອາຊີບເປັນກຳມະກອນກໍ່ສ້າງ ແລະ ຮັບຈ້າງທົ່ວໄປ ໄດ້ຮັບຄ່າຈ້າງວັນ 13.000 ກີບ ຫຼືປະມານວັນລະ 50 ບາດ ບໍ່ມີບ້ານ ແລະ ທີ່ດິນເຮັດການຜະລິດເປັນຂອງຕົວເອງ ຈຶ່ງໄດ້ຕັດສິນໃຈເຂົ້າຮ່ວມໂຄງການຄອບຄົວຕົວແບບຂອງສູນ ໃນປີ 2000 ໂດຍສູນໄດ້ຈັດສັນທີ່ດິນ ເນື້ອທີ່ 02 ເຮັກຕາ ຫຼື ປະມານ 12 ໄລ່ 2 ງານ ແບ່ງພື້ນທີ່ອາໄສອອກເປັນ 01 ງານ ເນື້ອທີ່ ນາ 03 ໄລ່ ຂຸດໜອງປາ 02 ງານ ສວນຜັກ 1 ໄລ່ ສ່ວນໄມ້ໃຫ້ໝາກ ແລະ ປ່າປະມານ 08 ໄລ່ ໃນປີ 2004 ການພັດທະນາດ້ານວິຊາການກະເສດ ໄດ້ໃຫ້ຄວາມຮູ້ເພີ່ມເຕີມກ່ຽວກັບການປັບປຸງນວິຖີການຜະລິດ ໂດຍການຖ່າຍທອດເທັກນິກການເຮັດກະເສດອິນຊີ ການເຮັດຝຸ່ນບົ່ມຊີວະພາບ, ປຸ໋ຍນ້ຳຊີວະພາບ ການຂະຫຍາຍພັນໄມ້ໃຫ້ໝາກ ໄດ້ແກ່ ການຕິດຕາ, ຕໍ່ກິ່ງ, ສຽບຍອດ ລວມເຖິງປັບວິທີຄິດ ທັດສະນະຄະຕິ ໃນການດຳລົງຊີວິດ ເມື່ອໄລຍະເວລາຜ່ານໄ 01 ປີ ຜົນປະກົດວ່າ ທ້າວ ແກ້ວ ແລະ ຄອບຄົວ ສາມາດມີເງິນເກັບ (ຈາກການສະສົມວັນລະປະມານ 60.000-70.000 ກີບ) ຊື້ທີ່ດິນ ເນື້ອທີ່ 1.5 ໄລ່ ທີ່ບ້ານ ນາຍາງ ເປັນຂອງຕົນເອງໄດ້.



ປະຈຸບັນ ທ້າວ ແກ້ວ ໄດ້ອອກຈາກສູນໄປແລ້ວ ແລະ ໄດ້ຢູ່ອາໃສ ແລະ ທຳມາຫາກິນຢູ່ ເນື້ອທີ່ດິນຂອງຕົນເອງ ໂດຍມີອາຊີບຫຼັກໃນການປູກຜັກ ແລະ ຂາຍກິ່ງພັນໄມ້ໃຫ້ໝາຫາ ນອກຈາກນີ້ ຍັງເປັນຜູ້ຖ່າຍທອດຄວາມຮູ້ ແລະ ເທັກນິກວິທີດ້ານການກະເສດແກ່ເພື່ອນບ້ານ ແລະ ຊາວກະສິກອນຊາວລາວດ້ວຍກັນເອງອີກດ້ວຍ.



■ ທ້າວ ຈັນດວງດີ ວັນນະສູກ ປະຈຸບັນ ອາຍຸ 58 ປີ ປະຊາຊົນບ້ານຫົວຊ້າງ ເມືອງນາຊາຍທອງ ນະຄອນຫຼວງວຽງຈັນ ເຂົ້າຮ່ວມເປັນສະມາຊິກສູນມາແຕ່ປີ 2001 ໂດຍໄດ້ເຂົ້າມາສຶກສາຮຽນຮູ້ ພັດທະນາດ້ານການກະເສດ ເບື້ອງຕົ້ນ ທ້າວ ຈັນດວງດີ ມີພື້ນທີ່ນາ 01 ເຮັກຕາ ຫຼືປະມານ 6.25 ໄລ່ ເຮັດນາໂດຍໃຊ້ຝຸ່ນເຄມີມາຕະຫຼອດ ເຮັດໃຫ້ມີຄ່າໃຊ້ຈ່າຍ ໃນການໃຊ້ຝຸ່ນເຄມີຫຼາຍກວ່າປີລະ 1.5 ລ້ານ ກີບ ແຕ່ຜົນຜະລິດເຂົ້າທີ່ໄດ້ພຽງປີລະ 3.5 ໂຕນ ເຊິ່ງພໍກິນແຕ່ສະເພາະໃນຄອບຄົວ ແຕ່ບໍ່ພໍຂາຍ ຕໍ່ມາໃນປີ 2002 ທ້າວ ຈັນດວງດີ ແລະ ໝູ່ເພື່ອນ ໄດ້ມາສຶກສາ ເບິ່ງແບບຢ່າງ ທີ່ປະເທດໄທ ໂດຍການ ສະໜັບສະໜູນຂອງ ກົມວິຊາການ ກະຊວງການຕ່າງປະເທດ ແລະ ສຳນັກງານ ກປຮ ມີຄວາມປະທັບໃຈກັບການກະເສດແບບປະສົມປະສານ ແລະ ການເຮັດນາໃນລະບົບກະເສດອິນຊີ ຈຶ່ງໄດ້ນຳເອົາກັບມາລົງມາປະຕິບັດ ໃນພື້ນທີ່ຂອງຕົນເອງ ຜົນປະກົດວ່າຄ່າໃຊ້ຈ່າຍໃນການເຮັດນາຫຼຸດລົງ ເຫຼືອຕົ້ນທຶນບໍ່ເຖິງ 100.000 ກີບ ແລະ ໄດ້ເຮັດຝຸ່ນໃຊ້ເອງ ໃນຂະນະທີ່ຜົນຜະລິດເຂົ້າເພີ່ມຂຶ້ນ ຈາກ 3.5 ໂຕນ ເປັນ 05 ໂຕນ ຕໍ່ ເຮັກຕາ ເຮັດໃຫ້ມີເຂົ້າເຫຼືອກິນ ແລ້ວ ຂາຍເປັນສິນຄ້າ ແລະ ເລີ່ມມີລາຍໄດ້ເພີ່ມຂຶ້ນ ເຮັດໃຫ້ມີເງິນເກັບຫຼາຍຂຶ້ນ.

ປະຈຸບັນ ທ້າວ ຈັນດວງດີ ມີທີ່ດິນ70 ໄລ່ ມີຝູງງົວ 50 ໂຕ ແລະ ມີໄກ່ ເປັດ ປາອີກເປັນຈຳນວນຫຼາຍ ຈົນໄດ້ຮັບການຍົກຍ້ອງໃຫ້ເປັນຊາວກະສິກອນດີເດັ່ນ ໃນກອງປະຊຸມທົ່ວ ປະຊາຊົນປະຕິວັດລາວ ຄັ້ງທີ IV ທີ່ນະຄອນຫຼວງວຽງຈັນ.



■ ທ້າວ ວັນ ຫຼວງສີໂຍທາ ປະຊາຊົນບ້ານ ນ້ຳກ້ຽງ ເມືອງ ນາຊາຍທອງ ນະຄອນຫຼວງວຽງຈັນ ອາຍຸ 55 ປີ ເບື້ອງຕົ້ນ ມີອາຊີບເຮັດນ, ຫາປາ ແລະ ເຂົ້າປ່າຫາຂອງປ່າ ແລະ ຮັບຈ້າງທົ່ວໄປລ້ຽງຄອບຄົວ ມີຖານະທຸກ ຊີວິດການເປັນຢູ່ ຂາດເຂີນ ມີໜີ້ສິນ ປີ 2003 ໄດ້ເດີນທາງມາທັດສະນະສຶກສາ ທີ່ປະເທດໄທ ຈາກສູນສຶກສາພັດທະນາພູພານ ອັນ ເນື່ອງມາຈາກພຣະຣາຊດຳຣິ ຈັງວັດສະກົນນະຄອນ ເຄືອຂ່າຍ ອິນແປງ ແລະ ເຄືອຂ່າຍ ວົນກະເສດພູພານ ຈັງວັດສະກົນນະຄອນ ທ້າວ ວັນ ມີຄວາມສົນໃຈ ກັບວິຊາການຂະຫຍາຍພັນໄມ້ໃຫ້ໝາກຫຼາຍ ໂດຍສະເພາະຢ່າງຍິ່ງວິທີການຕິດຕາ ການຕໍ່ກິ່ງ ແລະ ການສຽບຍອດ ໂດຍເລີ່ມນຳມາປະຕິບັດ ແລະ ປະກອບເປັນອາຊີບ. ສູນພັດທະນາ ແລະ ບໍລິການດ້ານການກະເສດຫ້ວຍຊອນ-ຫ້ວຍຊົ້ວ ໄດ້ເຂົ້າມາສະໜັບສະໜູນທາງວິຊາການ ແລະ ນຳມາຝຶກອົບຮົມ ຖອດຖອນບົດຮຽນທີ່ປະເທດໄທ ໄດ້ຮັບຄວາມຮູ້ ແລະ ແນວຄິດໃນການດຳລົງຊີວິດຕາມແນວກະເສດພໍພຽງ. ປະຈຸບັນ ເຖິງແມ່ນ ທ້າວ ວັນຈະເສຍຊີວິດໄປແລ້ວ ແຕ່ພັນລະຍາ ແລະ ລູກໄດ້ມາສືບຕໍ່ ມີ

ເຮືອນຊຳກ້າໄມ້ ມີການຂະຫຍາຍພືດພັນພື້ນບ້ານ ຂະຫຍາຍພັນໄມ້ໃຫ້ໝາກ ເຮັດດິນປູກ, ແກບເຜົາ ເພື່ອຂາຍໃຫ້ກັບເຮືອນເພາະຊຳ ຈຳນວນກວ່າ 20 ຮ້ານ ໃນນະຄອນຫຼວງວຽງຈັນ ມີການຈຳໜ່າຍພັນໄມ້ຫຼາຍຊະນິດເຊັ່ນ : ຜັກຕິ້ວ ກະໂດນ, ແຄ, ມ່ວງ, ລິ້ນຈີ່, ລຳໄຍ, ຂີ້ຮູດ ໝາກຂາມ, ສະເມັກ ແລະ ໝາກເຜັດເຮັດໃຫ້ຄອບຄົວມີລາຍໄດ້ ແລະ ມີຊີວິດຄວາມເປັນຢູ່ດີຂຶ້ນ ໂດຍຍຶດແນວທາງການເຮັດກະເສດອິນຊີ ສາມາດມີລາຍໄດ້ສະເລ່ຍປີລະ 100 ລ້ານ ກີບ ມີລົດ 02 ຄັນ ແລະ ມີສິ່ງອຳນວຍຄວາມສະດວກຕາມອັດຕະພາບ.




■ ທ້າວ ບຸນຕອງ ອາຍຸ 52 ປີ ເປັນຊົນເຜົ່າ ໄທດຳ ມີພື້ນເພມາຈາກເມືອງ ຊຳໃຕ້ ແຂວງ ຫົວພັນ ພາກເໜືອຂອງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ມາຢູ່ສຶກສາຮຽນຮູ້ ແລະ ຝຶກງານທີ່ສູນ ເປັນໄລຍະເວລາ 04 ປີ ໄດ້ຮຽນຮູ້ວິຊາການຜະລິດຜັກອິນຊີ ການເຮັດກະເສດແບບປະສົມປະສານ ການໃຊ້ອີງຄວາມຮູ້ ແລະ ພູມປັນຍາຈົນມີຄວາມຮູ້ ຄວາມຊຳນານ ແລະ ສາມາດເຮັດການຜະລິດ ແລະ ມີລາຍໄດ້ຢ່າງພໍພຽງ ສາມາດເກັບເງິນໄປຊື້ດິນທີ່ແຂວງ ຄຳມ່ວນໄດ້ 03 ເຮັກຕາ ຈາກນັ້ນໄດ້ອອກໄປສ້າງຄອບຄົວ ຢູ່ດິນຂອງຕົນເອງ ທີ່ບ້ານພັນໄຊ ເມືອງ ຄຳເກີດ ແຂວງ ຄຳມ່ວນ ມີລາຍໄດ້ຈາກການຜະລິດຜັກອິນຊີ ການເຮັດສວນຢາງພາຣາ ການເຮັດກະເສດປະສົມປະສານຢ່າງໝັ້ນຄົງ ແລະ ຍືນຍົງໃນອາຊີບ.



■ ນາງ ກັນຍາ ວັນນີ ປະຊາຊົນ ບ້ານ ນາຊັບ ເມືອງ ນາຊາຍທອງ ນະຄອນຫຼວງວຽງຈັນ ປູກເຫັດມາແລ້ວ 02 ປີ, ປີທຳອິດ ຊື້ກ້ອນອາຫານມາເປີດດອກ ປີຕໍ່ມາກຽມກ້ອນອາຫານປູກເຫັດເອງ ໂດຍການຮຽນຮູ້ຈາກການປູກເຫັດຄົນອື່ນ ແລະ ເຂົ້າຝຶກອົບຮົມທີ່ສູນ ຊະນິດເຫັດທີ່ປູກ ເລີ່ມຈາກເຫັດນາງລົມ ປະຈຸບັນ ປຸກເຫັດ ນາງລົມ ແລະ ເຫັດຂອນຂາວ ມີແມ່ຄ້າມາຮັບຊື້ຢູ່ບ້ານ ລາຄາເຫັດຂອນຂາວ 30.000 ກີບ (120 ບາດ)ຕໍ່ 1 ກິໂລກຣາມ, ເຫັດນາງລົມ 20.000 ກີບ(80 ບາດ) ຕໍ່ກິໂລກຣາມ ຜົນຕອບແທນ ຈາກການປູກເຫັດຂອນຂາວ ຈຳນວນ 4.000 ກ້ອນ ຕໍ່ ເຮືອນ 01 ຫຼັງ ເກັບຜົນຜະລິດ 06 ເດືອນ ໄດ້ປະມານ 15.000.000 ກີບ(60.000 ບາດ).



■ ນາງ ນາລີ ບຸບຜາພັນ ປະຊາຊົນ ບ້ານ ນາໜາດ ເມືອງ ນາຊາຍທອງ ນະຄອນຫຼວງວຽງຈັນ ລ້ຽງປາກ້ອງຄອກໄກ່ ໂດຍຊື້ພັນປາຈາກສູນ ໄປປ່ອຍລົງໜອງ ຈຳນວນ 110.000 ໂຕ ໃນໜອງຂະໜາດ6.25 ໄລ່ ຫຼື 01 ເຮັກຕາ ໂດຍເປັນພັນປານິນ ຈຳນວນ 80.000 ໂຕ ແລະ ພັນປາຕະເພຍ ຈຳນວນ 30.000 ໂຕ ເທິງໜອງປານັ້ນມີຄອກໄກ່ໄຂ່ ຈຳນວນ 4.000 ໂຕ ຄ່າໃຊ້ຈ່າຍໃນການຊື້ອາຫານປາ ຈຶ່ງບໍ່ມີເລີຍຕະຫຼອດການລ້ຽງປະມານ 07 ເດືອນ ເມື່ອງປາໃຫຍ່ພໍທີ່ຈະຈັບຂາຍໄດ້ ກໍ່ເອີ້ນແມ່ຄ້າມາຮັບ ຜົນຜະລິດທີ່ໄດ້ຢູ່ປະມານ 13 ໂຕນ ຕໍ່ການລ້ຽງ 01 ຮອບ ຄິດເປັນເງິນປະມານ 110 ລ້ານ ກີບ ເມື່ອຫັກຕົ້ນທຶນຄ່າພັນປາປະມານ 18 ລ້ານກີບ ກຳໄລທີ່ໄດ້ຈາກການລ້ຽງປາກ້ອງຄອກໄກ່ ປະມານ 92 ລ້ານ ກີບ ຕໍ່ການລ້ຽງ 01 ຮອບ.